ພະແນກຊ່ວຍເຫຼືອເຣື່ອງຢາເສບຕິດ ແລະ ເຫຼົ້າ ຈະຊ່ວຍທ່ານໄດ້ ຫຼາຍໆຢ່າງ - ໂດຍການໃຫ້ຄວາມຮູ້, ຄຳປຶກສາແນະນຳ ຫຼື ປິ່ນປົວ ຫຼື ແນະນຳໃຫ້ທ່ານໄປພົບພະແນກບໍຣິການອື່ນໆທີ່ກ່ຽວຂ້ອງ. ຖ້າທານຕ້ອງການຄວາມຊ່ວຍເຫຼືອ, ກະຣຸນາ ໂທຣຫາ ສູນສຸຂພາບທ້ອງຖິ່ນ ແລະ ຖາມເບິ່ງວ່າເພິ່ນມີການຊ່ວຍເຫຼືອ ອັນໃດ ແດ່. ຖ້າທ່ານໂທຣ ຍາມທີ່ທາງຫ້ອງການຫຍຸ້ງວຽກຫຼາຍ ແລະ ບໍ່ມີໃຜຊ່ວຍທ່ານໄດ້ໃນທັນທີໂລດ, ກໍໃຫ້ປະ ເລກ ໂທຣະສັບໄວ້ ເພື່ອໃຫ້ເພິ່ນ ໂທຣ ຄືນຫາເຈົ້າໄດ້, ຫຼື ບໍ່ດັ່ງນັ້ນ ກໍໃຫ້ໂທຣໄປໃໝ່ອີກ.

ຖ້າທ່ານຕ້ອງການຣາຍລະອຽດເພີ້ມເຕີມກ່ຽວກັບ ການຊ່ວຍເຫຼືອເຣື່ອງ ຢາເສບຕິດ ແລະ ເຫຼົ້າ, ກະຣຸນາໂທຣ ຫາ ສູນກາງສຶກສານາໆວັທນະທັມ ເຣື່ອງຢາເສບຕິດ ແລະເຫຼົ້າ (Drug and Alcohol Multicultural Education Centre) ເບີ ໂທຣ (02) 9699 3552.

NSW Multicultural Health Communication Service
website: http://mhcs.health.nsw.gov.au
e-mail: mhcs@sesahs.nsw.gov.au

multicultural communication

Laotian
10 May 1999
[BHC-5185]

# ບັນຫາເຣື່ອງເຫຼົ້າ ແລະ ຢາເສບຕິດ ເກີດຂຶ້ນກັບ ຄອບຄົວ ທົ່ວໆໄປ

## Alcohol and drug problems happen in all kinds of families

REVIEWED November 2004
NSWMulticulturalHealthCommunicationService

NSW HEALTH DEPARTMENT

## ບັນຫາເຣື່ອງເຫຼົ້າ ແລະ ຢາເສບຕິດ ເກີດຂຶ້ນກັບ ຄອບຄົວ ທົ່ວໆໄປ
Alcohol and drug problems happen in all kinds of families

ການຕໍ່ສູ້ກັບ ບັນຫາອັນໃດ ກໍຕາມ ຈະງ່າຍຂື້ນ ຫາກເຮົາມີ ຄົນໃນຄອບຄົວໃຫ້ ຄວາມຮັກ, ຄວາມສນັບສນູນ ແລະ ຄຳແນະນຳ ໃນຍາມລຳບາກ. ແຕ່ຍັງມີ ສຖານະການ ບາງຢ່າງ ທີ່ແມ່ນແຕ່ ຄວາມຮັກ ແລະ ພະລັງຊ່ວຍເຫຼືອຈາກ ຄອບຄົວ ກໍບໍ່ອາດ ຊ່ວຍໄດ້. ຕົວຢ່າງ ບັນຫາຢາເສບຕິດ ແລະ ເຫຼົ້າ.

ບາງຄົນຄິດວ່າ ບັນຫານີ້ ເກີດຂຶ້ນກັບບາງຄອບຄົວເທົ່ານັ້ນ. ແຕ່ມັນເກີດຂື້ນກັບ ຄອບຄົວທຸກໆປະເພດ ຈາກທຸກໆຊຸມຊົນ ແລະທຸກໆ ສາສນາ. ມັນໄດ້ເກີດຂື້ນກັບ ຄົນເຊັ່ນ ຄາຣ໌ລາ, ຊຶ່ງເປັນຄຣູ ອາຍຸ ໔໗ ປີ, ລາວຕື່ນແຕ່ເຊົ້າ ທຸກໆມື້ ແລ້ວຂັບຣົດໄປເຮືອນເຊົ່າ ທີ່ລູກຊາຍຊື່ ໂທນີ ອາຍຸ ໑໘ ປີ ແບ່ງ ເຊົ່າຢູ່, ເພື່ອປຸກ ໃຫ້ລູກຊາຍຕື່ນ ແລ້ວພາໄປການ. ຫາກ ຄາຣ໌ລາ ບໍ່ເຮັດແບບນີ້, ໂທນີ, ຜູ່ຕິດ ກັນຊາຢ່າງໜັກ, ກໍຈະຕື່ນໄປການບໍ່ທັນຈັກເທື່ອ ແລະ ກໍຈະຕົກງານອີກ.

ການເຮັດແບບນີ້ ທ້າມື້ຕໍ່ ອາທິດເປັນການ ລຳບາກ ສຳລັບ ຄາຣ໌ລາ - ມັນຕ້ອງໃຊ້ ເວລາດົນ ເພື່ອຈະປຸກ ໂທນີ ໃຫ້ຕື່ນ ບາງຄັ້ງ ຄາຣ໌ລາ ກໍເລີຍໄປການຊ້ານຳກັນອີກ. ນອກຈາກນີ້ ຄາຣ໌ລາ ຍັງຕ້ອງເຮັດແບບລັບໆລີ້ໆອີກ ເພາະວ່າ ຫາກ ສາມີຂອງນາງ ຮູ້ ລາວກໍຈະຕ້ອງຮ້າຍ. ລາວໄດ້ເຄີຍໂທດນາງແລ້ວ ເຣື່ອງທີ່ລູກຕິດຢາເສບຕິດ. “ບາງທີ ຫາກເຈົ້າ ເຂັ້ມງວດກັບມັນກວ່ານີ້ເມື່ອມັນຍັງນ້ອຍ ມັນກໍອາດຈະ ບໍ່ເປັນ ແບບນີ້.” ລາວຈົ່ມແບບນີ້ເລີຍໆ.

ໃນທີ່ສຸດ ຄາຣ໌ລາ ກໍໄປພົບຜູ້ໃຫ້ຄຳປຶກສາ ດ້ານຢາເສບຕິດ ແລະ ເຫຼົ້າ ທີ່ສູນ ສຸຂພາບຊຸມຊົນ ປະຈຳເຂດທ້ອງຖິ່ນ. ນັບວ່າ ເປັນຄັ້ງທຳອິດ ທີ່ ຄາຣ໌ລາ ໄດ້ມີ ໂອກາດເວົ້າເຖິງບັນຫານີ້ວ່າມັນມີຜົນສະທ້ອນຕໍ່ນາງເອງຢ່າງໃດ, ແລະເມື່ອໄດ້ເວົ້າ ອອກມາກໍເຮັດໃຫ້ນາງມີຄວາມຮູ້ສຶກຊ່ວງຂື້ນ. ຜູ່ໃຫ້ຄຳປຶກສາ ຍັງໄດ້ຊ່ວຍນາງຕື່ມ ໂດຍການເວົ້າໃຫ້ ຄາຣ໌ລາຟັງກ່ຽວກັບ ວິທີອື່ນ ທີ່ອາດຈະຊ່ວຍ ລູກຂອງນາງ ໄດ້. ຫຼາຍຄົນຄິດວ່າ ວິທີແບບອອສເຕຣເລັຍ ຊຶ່ງເອົາບັນຫາສ່ວນຕົວໄປປຶກສາ ກັບ ຜູ່ໃຫ້ຄຳປຶກສາ ເປັນວິທີທີ່ແປກ. ພວກເຂົາມອງບໍ່ເຫັນວ່າ ການປຶກສາ ກັບຄົນ ແປກໜ້າຈະຊ່ວຍໄດ້ຢ່າງໃດ. ແຕ່ວ່າ, ເຊັ່ນດຽວກັບຄາຣ໌ລາທີ່ໄດ້ພົບວ່າ, ການລົມ ກັບຄົນອື່ນຢູ່ນອກຄອບຄົວ ສ່ວນຫຼາຍ ຈະຊ່ວຍໃຫ້ ເຮົາເຫັນ ບັນຫາ ຈາກມຸມ ທີ່ແຕກຕ່າງອອກໄປ ແລະ ຊ່ວຍໃຫ້ ເຮົາພົບທາງໃໝ່ໆ ທີ່ຈະໃຊ້ ຕໍ່ສູ້ ກັບ ບັນຫາ ທັງຫຼາຍນັ້ນ.

ບາງຄັ້ງ ຄົນເຮົາ ມີຄວາມຮູ້ສຶກລະອາຍເກີນໄປ ທີ່ຈະເວົ້າ ກັບຜູ່ໃດຜູ່ນຶ່ງ ຊຶ່ງບໍ່ແມ່ນ ຄົນໃນຄອບຄົວ, ໂດຍສເພາະ ກ່ຽວກັບ ບັນຫາເຫຼົ້າ ຫຼື ຢາເສບຕິດ ທີ່ຜິດກົດໝາຍ. ແຕ່ວ່າ ການອຳ ກ່ຽວກັບ ບັນຫາ ຢາເສບຕິດ, ບໍ່ວ່າຈະເປັນ ເຫຼົ້າ, ຢາລະງັບປະ ສາດ, ເຮໂຣອິນ, ຫຼື ຢາເສບຕິດອື່ນໆ, ນັ້ນແມ່ນ ປ່ອຍໂອກາດ ໃຫ້ການໃຊ້ ຢາເສບຕິດ ດຳເນີນຕໍ່ໄປ ແລະ ເກີດບັນຫາຮ້າຍແຮງຂື້ນ ຕໍ່ທັງຜູ່ໃຊ້ ແລະ ຄົນ ຄອບຄົວ. ຢາເສບຕິດ ແລະ ເຫຼົ້າ ແມ່ນບັນຫາ ທາງສຸຂພາບນຳອີກ ແລະ - ຄືກັນກັບບັນຫາທາງສຸຂພາບອື່ນໆ - ອາດຕ້ອງໄດ້ຮັບຄວາມຊ່ວຍເຫຼືອ ຈາກແພດ.

ຖ້າຫາກ ເຮົາລົມນຳ ຜູ່ໃຫ້ຄຳປຶກສາ ຫຼື ແພດ ກ່ຽວກັບບັນຫາໃດ ບັນຫານຶ່ງ, ຜູ່ກ່ຽວ ຈະບໍ່ໄດ້ຮັບອະນຸຍາດເອົາບັນຫານັ້ນໄປເຜີຍກັບໃຜອີກ (ນອກຈາກ ພະນັກງານ ສຸຂພາບ ທີ່ກ່ຽວຂ້ອງ). ໄດ້ມີ ກົດລະບຽບທີ່ເຄັ່ງຄັດ ຫ້າມບໍ່ໃຫ້ພວກເພິ່ນເວົ້າຫຽັງ ກ່ຽວກັບເຣື່ອງນີ້ສູ່ຄົນອື່ນຟັງ, ຣວມທັງຄົນໃນຄອບຄົວດ້ວຍ. ກົດລະບຽບ ທີ່ ເຄັ່ງ ຄັດນີ້ ຍັງຣວມໄປຮອດ ນາຍພາສາອີກ. ຖ້າຫາກ ທ່ານຂໍ ເອົານາຍພາສາ ແຕ່ ໄດ້ພົບວ່ານາຍພາສາຄົນນັ້ນເປັນຄົນທີ່ທ່ານຮູ້ຈັກ, ທ່ານຈະຂໍປ່ຽນເອົານາຍພາສາ ຄົນອື່ນກໍໄດ້.